ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 0388 /ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 14 MAR 2007

# ຂໍ້ກຳນົດ

## ວ່າດ້ວຍມາດຕະການຄວບຄຸມການຜະລິດ ການນຳເຂົ້າ ແລະ ຈຳໜ່າຍ ຢາສູບ ຢູ່ສປປ ລາວ.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9/11/2005.
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 188/ນຍ, ລົງວັນທີ 17/08/2006.

ເພື່ອໃຫ້ສອດຄ່ອງກັບທິດທາງນະໂຍບາຍຂອງ ພັກ-ລັດຖະບານວາງອອກ, ປະຕິບັດຕາມລະບຽບຫຼັກການ ແລະ ມາດຕະການທີ່ວາງອອກໃຫ້ເໝາະສົມໃນແຕ່ລະໄລຍະ, ປົກປ້ອງ-ສົ່ງເສີມ ສິດ ແລະ ຜົນປະໂຫຍດຂອງການຜະລິດພາຍໃນໃຫ້ເຂັ້ມແຂງ ແລະ ເຕີບໃຫຍ່ຂະຫຍາຍຕົວຂຶ້ນເລື້ອຍໆ, ພ້ອມທັງເປັນການຊຸກຍູ້ ຫົວໜ່ວຍທຸລະກິດຢາສູບຕ່າງໆ ໃຫ້ດຳເນີນທຸລະກິດຂອງຕົນດ້ວຍຄວາມສະເໝີພາບ ຕໍ່ໜ້າກົດໝາຍ ແນໃສ່ໃນການແຂ່ງຂັນການຄ້າທີ່ເປັນທຳ ແລະ ເຂົ້າສູ່ລະບຽບການເທື່ອລະກ້າວ.

ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ກຳນົດດັ່ງນີ້:

<u>ມາດຕາ 01</u> : ຫົວໜ່ວຍວິສາຫະກິດນຳເຂົ້າ-ສົ່ງອອກຕ່າງໆ ທີ່ດຳເນີນທຸລະກິດ ຢູ່ພາຍໃນ ສປປ.ລາວ, ຕ້ອງຖືທະບຽນວິສາຫະກິດຢ່າງຖືກຕ້ອງ ຈຶ່ງສາມາດນຳເຂົ້າສິນຄ້າຕາມໝວດສິນຄ້າທີ່ຕົນໄດ້ຂຶ້ນທະບຽນໄວ້ແລ້ວນັ້ນ.

<u>ມາດຕາ 02</u>: ຢາສູບທຸກຊະນິດ ທີ່ນຳເຂົ້າມາຈາກຕ່າງປະເທດ ເພື່ອຈຳໜ່າຍຢູ່ພາຍໃນ ສປປ. ລາວ, ນອກຈາກຈະເສຍພັນທະໃຫ້ລັດ ຕາມລະບຽບການຂອງກະຊວງການເງິນວາງອອກແລ້ວ, ຕ້ອງໃຫ້ພິມຄຳເຕືອນກ່ຽວກັບສຸຂະພາບ ເປັນພາສາລາວໃສ່ຊອງ ແລະ ຕຸດຢາສູບ ຕາມມາດຖານເງື່ອນໄຂໃນຂໍ້ຕົກລົງຂອງກະຊວງ ສາທາລະນະສຸກ ສະບັບເລກທີ 661/ກຊສ, ລົງວັນທີ 23 ພຶດສະພາ 2006 ວາງອອກ.

<u>ມາດຕາ 03</u> : ໂຮງງານຜະລິດຢາສູບຢູ່ພາຍໃນ ສປປ. ລາວ ທີ່ມີຈຸດປະສົງຜະລິດຢາສູບ ເພື່ອຈຳໜ່າຍຢູ່ພາຍໃນ ກໍ່ຕ້ອງໄດ້ພິມຄຳເຕືອນກ່ຽວກັບສຸຂະພາບໃສ່ຊອງ ແລະ ຕຸດຢາສູບຂອງຕົນເຊັ່ນດຽວກັນກັບຢາສູບທີ່ນຳເຂົ້າມາຈາກຕ່າງປະເທດ.

<u>ມາດຕາ 04</u> : ທຸກໆການຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ຂອງຜະລິດຕະພັນຢາສູບ ທີ່ບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 02 ແລະ 03 ຂ້າງເທິງນີ້, ລ້ວນແຕ່ເປັນຢາສູບເຖື່ອນ ແລະ ຈະຖືກດຳເນີນຄະດີ ຕາມລະບຽບ ກົດໝາຍ ແລ້ວແຕ່ກໍລະນີໜັກ ຫຼື ເບົາ.

<u>ມາດຕາມ 05</u> : ເຈົ້າໜ້າທີ່ກວດກາການຄ້າຂັ້ນຕ່າງໆ ມີໜ້າທີ່ ຕິດຕາມ, ກວດກາ, ສະກັດກັ້ນການຄ້າ-ຂາຍຢາສູບເຖື່ອນຢູ່ພາຍໃນປະເທດ. ເມື່ອພົບເຫັນໃຫ້ປະສານສົມທົບກັບຂະແໜງການອື່ນ ທີ່ກ່ຽວຂ້ອງ ເປັນຕົ້ນແມ່ນພາສີ, ອາກອນ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ເພື່ອພ້ອມກັນ ປະຕິບັດລະບຽບວິໄນ ຕາມຂັ້ນຕອນທີ່ເໝາະສົມ ເຊັ່ນ : ຍຶດ, ທຳລາຍ, ປັບໃໝ, ຈັບກຸມ ແລະ ດຳເນີນຄະດີ ຕາມ ລະບຽບ ກົດໝາຍທີ່ວາງອອກຕາມຂັ້ນຕອນ ແລ້ວແຕ່ກໍລະນີໜັກ ຫຼື ເບົາ.

<u>ມາດຕາ 06</u> : ມອບໃຫ້ກົມອຸດສາຫະກຳ, ກົມການນຳເຂົ້າ-ສົ່ງອອກ, ກົມການຄ້າພາຍໃນ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ໃນທົ່ວປະເທດຈົ່ງພ້ອມກັນຈັດຕັ້ງ ແລະ ປະຕິບັດຕາມພາລະບົດບາດຂອງໃຜລາວຢ່າງເຂັ້ມງວດ.

<u>ມາດຕາ 07</u> : ຂໍ້ກຳນົດສະບັບນີ້ມີຜົນສັກສິດ ແລະ ເລີ່ມປະຕິບັດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ

<u>ບ່ອນສົ່ງ</u>:

| | |
|---|---|
| - ກົມເລຂາ, ຫ້ອງການ | 01 ສະບັບ. |
| - ຫ້ອງການກະຊວງ ອ ຄ | 01 - " - |
| - ກົມການຄ້າພາຍໃນ | 01 - " - |
| - ກົມອຸດສາຫະກຳ | 01 - " - |
| - ກົມການນຳເຂົ້າ-ສົ່ງອອກ | 01 - " - |
| - ພະແນກ ອຄ ແຂວງ ແລະ ນະຄອນຫຼວງ ໃນທົ່ວປະເທດ ບ່ອນລະ | 01 - " - |
| - ສຳເນົາ | 01 - " - |